ພາສາລາວ



# 老挝语

ພາສາລາວ

## 第四册



张良民 编著

ພາສາລາວ

外语教学与研究出版社

# ພາສາລາວ

# 老挝语

## 第四册

张良民　编著

外语教学与研究出版社

责任编辑：张良民
责任校对：肖礼海

**老挝语**
LAOWO YU
第四册
张良民　编著
*　*　*
外语教学与研究出版社出版发行
（北京西三环北路 19 号 100089）
http://www.fltrp.com.cn
北京外国语大学印刷厂印刷
开本 850×1168　1/32　11.75 印张　149 千字
1989 年 3 月第 1 版　2003 年 1 月第 2 次印刷
印数：1301—1600 册
*　*　*
ISBN 7-5600-0525-X
G·254
定价：14.90 元

# ສາລະບານ


| | | | |
|---|---|---|---|
| ບົດທີ | ໑ | ປະເທດລາວອັນແສນຮັກຂອງພວກເຮົາ | 1 |
| ບົດທີ | ໒ | ໝາກບ່ວງເປັນເຫດ | 23 |
| ບົດທີ | ໓ | ສາມສ່ຽວ | 42 |
| ບົດທີ | ໔ | ຈົດໝາຍສະບັບໜຶ່ງທີ່ໄດ້ຮັບໂດຍບໍ່ນຶກບໍ່ຝັນ | 58 |
| ບົດທີ | ໕ | ທ່ານຮູ້ບໍ່ວ່າມີຫຍັງເກີດຂຶ້ນກັບທ່ານເມື່ອທ່ານດູດຢາ | 79 |
| ບົດທີ | ໖ | ບຸນປີໃໝ່ລາວ | 100 |
| ບົດທີ | ໗ | ປະຊາກອນໂລກ | 117 |
| ບົດທີ | ໘ | ປະເທດຈີນສວຍງາມ | 135 |
| ບົດທີ | ໙ | ສິ່ງແວດລ້ອມທຳມະຊາດແລະມະນຸດ | 153 |
| ບົດທີ | ໑໐ | ໜັງສືພິມສະບັບສຸດທ້າຍ | 177 |
| ບົດທີ | ໑໑ | ແມ່ເສຍ | 199 |
| ບົດທີ | ໑໒ | ໄກ່ຂັນຍາມເດິກ | 223 |
| ບົດທີ | ໑໓ | ເໝືອງຄະລາງ | 250 |
| ບົດທີ | ໑໔ | ສິ້ນໃຈໂດຍຫຍ້ | 278 |
| ບົດທີ | ໑໕ | ໃຜແມ່ນບຸກຄົນທີ່ໜ້າຮັກແພງທີ່ສຸດ (໑) | 302 |
| ບົດທີ | ໑໖ | ໃຜແມ່ນບຸກຄົນທີ່ໜ້າຮັກແພງທີ່ສຸດ (໒) | 331 |

## ບົດທີ ໑

# ປະເທດລາວອັນແສນຮັກຂອງພວກເຮົາ

ປະເທດທີ່ຮັກຂອງພວກເຮົາ ຕັ້ງຢູ່ໃນລະຫວ່າງເສັ້ນຂະໜານແຖບຮ້ອນທີ່ມີອາກາດອົບອຸ່ນດີ, ພືກສາຊາດສົດຊື່ນຂຽວງາມຕະຫຼອດປີ, ດິນຟ້າອາກາດ ກໍເໝາະແກ່ການກະສິກຳປູກຝັງ ແລະລ້ຽງສັດ, ມີທົ່ງພຽງປ່າດົງ ແລະທົ່ງໃຫຍ່ໄພສານ, ແມ່ນ້ຳລຳເຊຍືດຍາວ ໄຫຼຕາມທີ່ຮາບກວ້າງຂວາງ ອັນມີເນື້ອດິນຮ້ວນຊຸ່ຍ, ພູມີພາບທຳມະຊາດງາມຕາເປັນໜ້າອອນຊອນ, ຊັບໃນດິນສິນໃນນ້ຳສຸດທີ່ອຸດົມສົມບູນ, ມີສາຍພູຫຼວງປາກເລີ້ວແຕ່ເໜືອລົງໃຕ້ຕັ້ງບັງລົມບູນດວງຍັບແຮ ໄອທະທາດມາງຂະບົດ. ນອກນັ້ນສາຍພູຫຼວງຍັງເປັນເສັ້ນຊາຍແດນທຳມະຊາດລະຫວ່າງ ປະເທດຫວຽດນາມ ກັບລາວເຮົາ, ປະເທດເຮົາມີແມ່ນ້ຳລຳເຊໃຫຍ່ນ້ອຍນັບ ເປັນຮ້ອຍສາຍ (ໃນນັ້ນມີ ໑໔ ສາຍໃຫຍ່ຄື :- ແມ່ຂອງ, ນ້ຳທາ, ນ້ຳອູ, ນ້ຳເຊືອງ, ນ້ຳຄານ, ນ້ຳມ້າ, ນ້ຳງື່ມ, ນ້ຳງຽບ, ນ້ຳຊັນ, ນ້ຳກະດິງ, ເຊບັ້ງໄຟ, ເຊບັ້ງຫຽງ, ເຊກອງ ແລະເຊໂດນ). ບັນດາແມ່ນ້ຳລຳເຊເຫຼົ່ານີ້ ໄດ້ໃຫ້ຄວາມອຸດົມຈົມສົມບູນແກ່ໄຮ່ນາຕາການຂອງຊາວລາວເຮົາ. ແມ່ນ້ຳຕ່າງໆ ຍັງເປັນແຫຼ່ງກຳເນີດຂອງປູປາບາງຊະນິດອື່ນໝົດບໍ່ເປັນຈັກເທື່ອ, ເປັນແຫຼ່ງອາຫານລ້ຽງປະຊາຊົນລາວເຮົາ. ແມ່ນ້ຳຕ່າງໆ ຍັງເປັນສາຍຄົມມະນາຄົມທຳມະຊາດ ທີ່ເຮັດໃຫ້ປະຊາຊົນລາວເຮົາ ໄປມາຫາສູ່ກັນສະດວກໃນການທຳມາຫາກິນຄ້າຂາຍລະຫວ່າງທ້ອງຖິ່ນນີ້ ກັບທ້ອງຖິ່ນນັ້ນ, ທັງສະບາຍໃນການກໍ່ສ້າງຈີນນະ ບົດສ

ຕົວເມືອງ ແລະແຂວງຕ່າງໆອີກດ້ວຍ ...... ບັນດາແມ່ນ້ຳເຫຼົ່ານີ້ແມ່ນ້ຳຂອງ ເປັນແມ່ນ້ຳສຳຄັນລື່ນໝູ່, ແມ່ຂອງມີແກ່ງມີດອນ ນັບເປັນຮ້ອຍແຫ່ງ, ມີຫຼາຍດອນ ສາມາດໃຊ້ແຮງນ້ຳເປັນແຫຼ່ງກຳເນີດພະລັງໄຟຟ້າໄດ້; ເວົ້າສະເພາະດອນ ພະເພງຫຼີ່ຜີ, ບໍ່ພຽງແຕ່ເປັນພູມີພາບທຳມະຊາດ ອັນວິຈິດງົດງາມເທົ່ານັ້ນ, ແຕ່ເມື່ອໄດ້ຮັບການສະຖາປະນາດອນເຫຼົ່ານີ້ແລ້ວ, ມັນຈະສາມາດສົ່ງກະແສໄຟຟ້າໃຫ້ທົ່ວພາກໃຕ້ອິນດູຈີນຢ່າງພຽງພໍ.

ປະຊາຊົນລາວເຮົາ ໄດ້ດຳລົງອາຊີບຢູ່ຕາມຂອບຝັ່ງ ເລາະລຽບແມ່ນ້ຳລຳເຊ ແລະຕາມເກາະດອນຕ່າງໆ ຢ່າງຖາວອນສືບຕໍ່ກັນມາຫຼາຍຮ້ອຍຊົ່ວຄົນແລ້ວ. ເບິ່ງເຂດທະສະຖານບ້ານຊ່ອງຕັ້ງຢັ້ງຢາຍກັນຢູ່ຕາມແຄມຝັ່ງແມ່ນ້ຳ, ກົກໝາກ, ກໍໄຜ່, ກົກພ້າວ, ກົກຕານ, ສວນປ່ານ, ສວນມອນ, ປ່າຄ້ຽ, ສວນຢາ ແລະພືດພັນພືດໄມ້ນາໆຊະນິດ ໄດ້ກາຍເປັນສິ່ງປະດັບປະດາເພີ່ມຄວາມສວຍງາມໃຫ້ແກ່ປະເທດຊາດເຮົາຢ່າງໜ້າງຶດງໍ້. ແມ່ນ້ຳລຳເຊເຫຼົ່ານີ້ ບໍ່ພຽງແຕ່ໃຫ້ຄວາມອຸດົມສົມບູນ ໃນການດຳລົງຊີບຂອງປວງຊົນເທົ່ານັ້ນ, ຍັງເປັນທັດສະນີຍະພາບ ອັນແສນງາມດູດດຶງໃຈບັນດານັກທ່ອງທ່ຽວບັນດານັກແຕ່ງກາບກອນ ແລະນັກກະວີຕ່າງໆ ຊຶ່ງໄດ້ອີງໃສ່ແມ່ນ້ຳລຳເຊເພື່ອປະດິດເປັນທຳນອງຮ້ອງລຳຕ່າງໆ ອັນມ່ວນ ແລະຕ້ອງໃຈທັງໜ້າອອນຊອນອີກດ້ວຍ, ດັ່ງຢ່າງ: ລຳລ່ອງຂອງ, ຂັບທຶ້ມ, ລຳສີພັນດອນ, ລ້ວນແຕ່ເກີດມາຈາກມູນເຄົ້າຂອງແມ່ນ້ຳລຳເຊນັ້ນເອງ.

ປະເທດເຮົາມີທົ່ງພຽງຫຼາຍບ່ອນອັນກວ້າງຂວາງເຊັ່ນ: ທົ່ງພຽງນ້ຳທາ, ທຸລະຄົມ, ບໍລິຄັນ, ມະຫາໄຊ, ແກ້ງກອກ, ຈຳປາສັກ ນັບເປັນຮ້ອຍ ແຫ່ງທີ່ຢັ້ງຢາຍກັນຢູ່ທົ່ວໄປ ຕາມທ້ອງຖິ່ນຕ່າງໆ. ທົ່ງພຽງເຫຼົ່ານີ້ເປັນທ້ອງຖິ່ນທີ່ ມີພົນລະເມືອງຢູ່ຢ່າງໜາແໜ້ນ, ເພາະວ່າທົ່ງພຽງເຫຼົ່ານີ້ ເປັນອູ່ເຂົ້າອູ່ປາຂອງ ປະ-

ຊາວີນລາວເຮົາ. ນອກຈາກທົ່ງພຽງກວ້າງຂວາງດັ່ງກ່າວແລ້ວ, ເຮົາຍັງມີທົ່ງພຽງນ້ອຍໆນັບພັນແຫ່ງຢ່າຍຢູ່ຕາມຫວ່າງພູພາຊຶ່ງເປັນບ່ອນປູກຝັງເຂົ້າ, ສາລີ.ຈຳພວກມັນຕ່າງໆແລະພືດພັນພືນລະໄມ້ເຊັ່ນ: ໝາກອຶ, ໝາກແຕງ, ໝາກຖົ່ວ.ງາແລະອື່ນໆ. ພືດພັນເຫຼົ່ານັ້ນ ແນວໃດກໍ່ແຊບກໍ່ຫວານ. ຮອດຍາມປູກຝັງມາ , ເບິ່ງເຄືອງປູກແນວໃດ ກໍ່ງອກງາມຂຽວອຸ່ມທຸ່ມທົ່ວດ້າວ. ບໍ່ພຽງແຕ່ເທົ່ານັ້ນ,ພວກເຮົາຍັງມີພູພຽງອັນກວ້າງໃຫຍ່ໄພສານອີກເຊັ່ນ: ພູພຽງເມືອງພວນທົ່ງໄຫຫີນແລະບໍລະເວນຊຶ່ງເປັນທົ່ງຫຍ້າອັນກວ້າງສຸດສາຍຕາ , ພູພຽງເຫຼົ່ານີ້ເໝາະແກ່ການລ້ຽງສັດຢ່າງຍິ່ງ. ນອກຈາກການລ້ຽງສັດແລ້ວ, ຍັງເໝາະແກ່ການປູກກືກໄມ້ອັນເປັນວັດຖຸດິບໃຊ້ເຂົ້າໃນການອຸດສາຫະກຳອີກດ້ວຍເຊັ່ນ: ຕົ້ນຊາ. ກາເຟ. ແກ່ງກີນາ. ຕົ້ນແປກ. ຕົ້ນສົນ. ຕົ້ນກ້ວຍ. ຕົ້ນຢາງກະຕັງກະຕອ, ໝາກແໜ່ງ, ໝາກນັດແລະອື່ນໆ......

ນອກຈາກເຮົາມີເນື້ອທີ່ດິນກວ້າງຂວາງແລ້ວ, ສ່ວນດິນດອນດອນທຽງພັດແມ່ນດິນພັງຜູ່ອົມຟູ່ນດີດ້ວຍ. ຖ້າມາຄິດສະເລ່ຍຈຳນວນຕາດິນໃສ່ກັບພົນລະ ເມືອງລາວເຮົາແລ້ວ, ພົນລະເມືອງຜູ້ໜຶ່ງ ໄດ້ຮັບຕາດິນຫຼາຍກວ່າບາງປະເທດຊ້ຳ . ດ້ວຍເຫດພົນແລະເງື່ອນໄຂດັ່ງກ່າວນັ້ນຈຶ່ງເວົ້າໄດ້ວ່າພວກເຮົາສາມາດສົ່ງເສີມ ຊຸກຍູ້ດ້ານເພີ່ມພູນພະລິດພົນແລະສາງອຸດສາຫະກຳຂອງຕົນໄດ້ດີ. ວັດຖຸສິ່ງຂອງທີ່ ເຮົາພະລິດຂຶ້ນນັ້ນ, ບໍ່ພຽງແຕ່ບຳລຸງພົນລະເມືອງ ເຮົາໄດ້ພຽງພໍເທົ່ານັ້ນ,ແຕ່ມັນອາດເຫຼືອໃຊ້ ແລະກາຍເປັນສິນຄ້າຂາຍອອກ ເພື່ອແລກປ່ຽນສິນຄ້າກັບຕ່າງປະ ເທດອີກດ້ວຍ.

ໃນປະເທດເຮົາ ເນື້ອທີ່ຊຶ່ງເປັນປ່າດົງນີ້ເຖິງ ໕໐ ສ່ວນຮ້ອຍຂອງໜ້າດິນທັງໝົດ. ປ່າດົງເຫຼົ່ານັ້ນ ເປັນຊັບພະຍາກອນອັນລ້ຳຄ່າຂອງຊາດເຊັ່ນ: ປ່າໄມ້

ແປກທີ່ເມືອງແປກເມືອງທ່າໂທມ, ພູເຂົາຄວາຍ, ທາທົ່ມ. ປ່າແປກ ດົງກາວນັ້ນ ລ້ວນແຕ່ເປັນປ່າກວ້າງໃຫຍ່ໄພສານທັງນັ້ນ. ປ່າໄມ້ສັກເຮົາກໍມີຫລາຍ ດົກົນ, ຫລາຍລ້ານຫມື່ນແຮບປ່າກລາຍ, ໄຊຍະບູລີແລະຫລວງພະບາງ.ໃນດົງໃຫຍ່ໄພຫນາຂອງພວກເຮົາຍັງມີໄມ້ຫລາຍຊະນິດ. ນອກຈາກຈຳພວກໄມ້ແລ້ວ, ຍັງມີເຄື່ອງປ່າຂອງດົງອີກ. ປະລິມານຫລວງຫລາຍຄຸນນະພາບກໍສູງອີກດ້ວຍ, ເປັນຕົ້ນ ແມ່ນຫມາກແຫນ່ງ. ດັ່ງແດງ. ຂີ້ຊີ້, ຍາງ. ຈັນທອມ. ນ້ຳມັນຍາງ, ນ້ຳເຜິ້ງ, ກະດູກສັດປ່າ. ຫນັງສັດຕ່າງໆ... ໃນດົງເຮົາຍັງມີຈຳພວກສັດປ່າຄື: ຊ້າງ, ເສືອ, ຫມີ, ກະທິງ, ກວາງ, ຟານ, ເຍືອງ, ທະນີ, ລີງ, ຄ່າງແລະຈຳພວກນົກຕ່າງໆເຊັ່ນ: ນົກເຂົາ, ນົກຍູງ, ສາລິກາ, ນົກແກ້ວ, ໄກ່ປ່າ ເປັນຕົ້ນ.

ເມື່ອເຮົາຮັກແພງຫວງແຫນປ່າດົງພົງໄພຂອງພວກເຮົາທີ່ໃດ, ພວກເຮົາແຮງອອກແຮງພາກພຽນຮັກສາປ້ອງກັນມັນໄວ້, ຍ້ອນວ່າປ່າດົງເຫລົ່ານີ້ແມ່ນສົມບັດອັນລ້ຳຄ່າຂອງພວກເຮົາ ແລະ ເປັນແຫລ່ງຊັບພະຍາກອນອັນເປັນມໍລະດົກຕົກທອດມາຈາກປູ່ຍ່າຕາຍາຍຂອງພວກເຮົາເພິ່ນສ້າງໄວ້ໃຫ້ເຮົາໃຫ້ລູກຫລານເຫລັນຫລອນພາຍຊ້ອນດ້ວຍ.

ດັ່ງກ່າວມານັ້ນແມ່ນຊັບສົມບັດຢູ່ເທິງຫນ້າດິນ, ສ່ວນຊັບສົມບັດທີ່ຢູ່ພື້ນແຜ່ນດິນຊ້ຳຍັງຫລາຍ, ໃນພື້ນແຜ່ນດິນຂອງຊາດເຮົາຍັງມີຈຳພວກບໍ່ແຮ່ຈັກວ່າທີ່ໃດຄື: ບໍ່ເຫລັກ, ບໍ່ຂາວ, ບໍ່ກົ່ວ, ບໍ່ຊືນ, ບໍ່ທອງເຫລືອງ, ບໍ່ທອງແດງ, ບໍ່ເງິນ, ບໍ່ຄຳ, ບໍ່ມາດ, ບໍ່ແກ້ວ, ບໍ່ຖ່ານຫີນແລະບໍ່ນ້ຳມັນກາດກໍມີ, ຮອດປັດຈຸບັນນີ້ມັນຍັງບໍ່ທັນໄດ້ຮັບການຂຸດຄົ້ນ ກົ່ນເອົາເທື່ອ, ມີແຕ່ບໍ່ກົ່ວທີ່ໂພນທິວ ແລະບໍ່ແຫນງ, ຝະລັ່ງເຄີຍຂຸດເອົາແຕ່ ຫມົ່ງຫມັ້ນ. ນອກນັ້ນພວກເຮົາຍັງມີເກືອຫລາຍແຫ່ງ, ຍິ່ງກວ່ານັ້ນຍັງມີບໍ່ແກ້ວ, ບໍ່ຄຳຢູ່ຫ້ວຍຊາຍແລະອັດຕະປື.

ພວກເຮົາອາດເວົ້າໄດ້ວ່າ, ເມື່ອປະເທດເຮົາ ໄດ້ເປັນເອກະລາດ ຢ່າງ

ສົມບູນແລ້ວແລ້ວ , ພວກເຮົາກໍ່ຈະຕ້ອງມີຈຸດພະຍາຍາມບຸກເບີກພຽງພໍແກ່ການເສດຖະກິດ ແປງເມືອງຂອງພວກເຮົາໃຫ້ກາຍເປັນປະເທດອຸດສາຫະກຳທັນສະໄໝ ທີ່ຮຸ່ງເຮືອງ ສົດໃສ./.

## ສັບໃໝ່

ເສັ້ນຂະໜານ ນ. 平行线，纬线

ແຖບຮ້ອນ ນ. 热带

ພືດສາຈາດ ນ. 植物

ຟົ່ງຟຸ່ຍ ຄ. 松散，松脆

ນ້ຳທາ ນ. 南塔河

ນ້ຳອູ ນ. 南乌江

ນ້ຳເຊືອງ ນ. 南甚河

ນ້ຳຄານ ນ. 南堪河

ນ້ຳມ້າ ນ. 南马河

ນ້ຳງື່ມ ນ. 南岸河

ນ້ຳງຽບ ນ. 南涅河

ນ້ຳຊັນ ນ. 南汕河

ນ້ຳກະດິງ ນ. 南卡定河

ເຊບັ້ງໄຟ ນ. 宾非河

ເຊບັ້ງຫຽງ ນ. 宾汉河

ເຊກອງ ນ. 贡河

ເຊໂດນ ນ. 顿河

ແຫຼ່ງ ນ. 所在地，发源地

ແກ່ງ ນ. 礁石

ຄອນ ນ. 急流处

ເຄຫະສະຖານ ນ. 居宅，住房

ດົງໄມ້ປ່າສັກ ນ. 柚木林

ກົກໝາກ ນ. 槟榔树

ກົກພ້າວ ນ. 椰子树

ກົກຕານ ນ. 糖棕树

ສວນມອນ ນ. 桑园

ທັດສະນີຍະພາບ ນ. 风景胜地

ດ້ອຍໃຈ ຄ. 扣人心弦

ມູນເຄົ້າ ນ. 根源，根本

ທີ່ພຽງນ້ຳທາ ນ. 南塔河平原

ທຸລະຄົມ ນ. 杜拉空（平原）

ມະຫາໄຊ ນ. 马哈赛（平原）

ທົ່ງລີ້ນ ນ. 波利堪(平原)

ແກ້ງກອກ ນ. 更谷(平原)

ອູ່ເຂົ້າອູ່ປາ ນ. 鱼米之乡

ແນງກີນາ ນ. 金鸡纳

ຕົ້ນແປກ ນ. 柏树

ຕົ້ນສົນ ນ. 松树

ຕົ້ນຢາງກະຕົ້ງກະຕໍ ນ. 橡胶树

ໝາກແໜ່ງ ນ. 沙仁

ໝາກນັດ ນ. 菠萝

ໄມ້ສັກ ນ. 柚木

ຂີ້ຄັ່ງ ນ. 紫胶，虫胶

ຊຸ ນ. 树胶，

ຍານ ນ. 安息香

ຈັນທອມ ນ. 檀香木

ກະທິງ ນ. 野牛

ເຍືອງ ນ. 羚羊

ທະນີ ນ. 猩猩

ຄ່າງ ນ. 长尾猿

ນົກເຂົາ ນ. 斑鸠

ສາລິກາ ນ. 八哥

ບໍ່ເຫຼັກ ນ. 铁矿

ບໍ່ກົ່ວ ນ. 锡矿

ບໍ່ຊືນ ນ. 铅矿

ບໍ່ມາດ ນ. 硫矿

ບໍ່ແກ້ວ ນ. 宝石矿

ຂຸດຄົ້ນກັບເອົາ ກ. 开采，挖掘

## ຂໍ້ສັງເກດໃນບົດຮຽນ

໑. ເສັ້ນຂະໜານ

ນ. 平行线 , ເສັ້ນຮຸ້ງ 纬线 , ເສັ້ນແວງ 经线 ,
ເສັ້ນສູນທ່ຽງ 子午线 , ເສັ້ນສູນສູດ 赤道

໒. ແຖບຮ້ອນ

ນ. 热带 , ແຖບໜາວ, ແຖບອົບອຸ່ນ,

ແຖບທົ່ງພຽງ 平原地区　　ແຖບພູດອຍ 山区

ແຖບຂອງຝັ່ງແມ່ນ້ຳຂອງ 湄公河流域，湄公河两岸

໓. ແມ່ນ້ຳລຳເຊ

ນ. 河流，北方人称河流为 "ແມ່ນ້ຳ"， 南方人称河流为 "ເຊ".

໔. ແຫຼ່ງ

ນ. ແຫ່ງ, ທີ່, ທີ່ຢູ່, ທີ່ຕັ້ງ, ແຫຼ່ງທີ່ຢູ່ 居住地

ຫຼັກແຫຼ່ງ 永久居住地

໕. ແກ້ງ

໑) ຫີນທີ່ຕັ້ງຂວາງທາງນ້ຳໄຫຼ, ບ່ອນມີຫີນຂວາງ 礁石，石滩

໒) ຕັ້ງໃຈທຳໃຫ້ຜິດຈາກຄວາມປະສົງເດີມ, ແກ້ງເຮັດ, ແກ້ງທຳ

假装，故意，佯作

໖. ຄອນ

ນ. ແປວນ້ຳເລິກ, ທາງນ້ຳໄຫຼ 急流

ກ. ເອົາໄມ້ຫຼືໄມ້ຄານສອດເອົາຂອງຂ້າງດຽວໃສ່ບ່າໄປ 扛着，抬着

ວ. ຄອນແຄນ - ບໍ່ແໜ້ນ, ເໜັງໄປມາໄດ້ 动摇的，不坚固的

໗. ກຳເນີດ



此为试读，需要完整PDF请访问：www.ertongbook.com

ເກີດ, ກຳເນີດເກີດຂຶ້ນ, ກຳເນີດເກີດຕັ້ງ

生，诞生，发生，建立

- ວັນທີ ໑ ເດືອນ ໗ ເປັນວັນທີ່ກຳເນີດເກີດຕັ້ງຂອງພັກກອມມູນິດຈີນ.
- ໂຮງຮຽນສ້າງຄູຊັ້ນຕົ້ນແຂວງຫຼວງພະບາງ ກຳເນີດເກີດຂຶ້ນ ໄດ້ ໖໐ ປີ ແລ້ວ.

ກຳເນີດເກີດເກົ້າ : 生，出生

- ພໍ່ແມ່ຜູ້ໃຫ້ກຳເນີດເກີດເກົ້າ
- ພໍ່ແມ່ຜູ້ບັງເກີດເກົ້າ. → 亲生父母

໖. ວິຈິດ

ວ.

ງາມ 美丽，绮丽的

ວິຈິດຕະກຳ, ວິຈິດສິນລະປະ 美术

ອະທິບາຍສັ້ນ

໑. ໄຮ່ນາຄາກາ.

ໄຮ່ - ແມ່ນບ່ອນປູກຝັງທີ່ຖາງໃນເຂດປ່າ, ແລ້ວຈູດໃຫ້ກ້ຽງແລ້ວປູກເຂົ້າ ປູກໃສ່, ຖ້າປູກອັນໃດຫຼາຍ ກໍເອີ້ນໄຮ່ອັນນັ້ນ, ເຊັ່ນ ໄຮ່ເຂົ້າ, ໄຮ່ຝ້າຍ, ໄຮ່ສາລີ, ໄຮ່ມັນດິນ, ໄຮ່ກາເຟ...

- ໄຮ່ຕ່າງຈາກສວນແນວໃດ? - ສວນແມ່ນບ່ອນປູກຝັງຖາວອນ, ລ້ອມຮົ້ວເສັຍຫາປູກຕົ້ນໄມ້ຕ່າງໆ ກິນຫຼາຍປີ, ໄຮ່ແມ່ນເຮັດປີດຽວ, ເລີກເລີ້ອງປູກອອກໝົດແລ້ວ ປະໃຫ້ເກີດເປັນປ່າອີກ.

ຈີນຈາກລາວເທີງ ລາວສູງເຮັດໄຮ່ເຂົ້າ, ໄຮ່ສາລີ, ໄຮ່ຝ້າຍ, ໄຮ່ຢາຝິ່ນຢູ່ຕາມພູ.

ນາ - ແມ່ນບ່ອນປູກເຂົ້າໜຶ່ງນໍ້າ, ນາບາງບ່ອນ ກໍ່ປູກເຂົ້າ ດ້ວຍ ການດຳ, ຄືເອົາກ້າປູກຕາມນາເປັນຫົນແຖວ, ເອີ້ນນາດຳ, ນາບາງບ່ອນ ກໍ່ໄຖ ຄາດດີ 5 ແລວ, ເອົາແນວເຂົ້າຫວ່ານທົ່ວນາ ໃຫ້ເຂົ້າເກີດຂຶ້ນ, ບໍ່ຕ້ອງດຳເອີ້ນນາຫວ່ານ.

ຕາກ້າ - ແມ່ນບ່ອນກະເຂົ້າ ສຳລັບໃຫ້ງອກຍົ້ນໂຫຍສົມຄວນແລ້ວ ເອົາໄປປູກໃສ່ນາ. ເຈົ້າຂອງນາບາງຄົນ ກໍເອົາໄຮ່ນາທີ່ດີ - ທີ່ມີປຸຍ ໃນນາຂອງຕົນ ໄຖຈາກດົ່ງແລ້ວ ຫວ່ານເຂົ້າແນວໃສ່, ນີ້ກໍ່ ເອີ້ນວ່າ ຕາກ້າ. ເຈົ້າຂອງນາບາງຄົນ ກໍເອົາເຂົ້າແນວສັກໃສ່ດິນທີ່ມະດາ ຢູ່ນອກນາ, ເອົາກ້າໃຫ້ຍອບສົມຄວນແລ້ວ ກໍ ຖອນກ້າປູກໃສ່ນາ, ນີ້ກໍເອີ້ນວ່າ ຕາກ້າດອນ.

ເມື່ອລວມ ກໍ ສັງເກດມາເປັນວະລັດທັງ ເຮັດໄຮ່ນາຕາກ້າ ກໍ ໝາຍເຖິງທີ່ດິນປູກຝັງທີ່ງາມດີນນອງ, ກໍ່ໝາຍເຖິງໄຮ່ແລະນາ. ບ່ວນີ້ໄຮ່ນາຂອງຄົນລະລອນ ກໍມີຄວາມໝາຍ ຮ່ວມໄຮ່ນາຕາກ້າ.

4. ລອຍ

ກ. ເລາະໄປມາຕາມຄົນ, ຍ້າງໄປຕາມທາງຍາວຂອງອັນໃດອັນໜຶ່ງ.

- ບ້ານຊາວພູດອຍບ້ານນີ້ ຢູ່ລອຍຕາມຕີນພູ.
- ທາງເສັ້ນ ລອຍໄປ ຕາມແຄມນໍ້າ.
- ທາງເສັ້ນ ລອຍໄປຕາມກຳແພງອ້ອມເມືອງ.

- ເຂົາຍ່າງລຽບໄປຕາມຮິມທາງ.

ລຽບລຽງ - ກ. 编排, 编纂　　ລຽບລຽງຮຽງໄວ້ 收拾

- ເອົາໄດ້ເກັບມ້ຽນລຽບລຽງຮຽງໄວ້ ຢ່າງຈຽບງາມ.

ລຽບລ່ຳ - ລຽບລ່ຳຄ່ຳຄອຍ 关照, 照料

໓. ສະຖາປະນາ

ກ. ສ້າງຕັ້ງ, ສ້າງສາ, ກໍ່ສ້າງ

- ວັນທີ່ ໑ ຕຸລາ ໑໙໔໙ ທ່ານປະທານເໝົາ ໄດ້ປະກາດສະຖາປະ ນາ ສາທາລະນະລັດປະຊາຊົນຈີນ ຢູ່ທີ່ທຽນອັນເໝີນ (ໄດ້ປະກາດສ້າງຕັ້ງ ສາທາລະນະລັດປະຊາຊົນຈີນຂຶ້ນ)
- ແຕ່ກ່ອນປະເທດລາວ ມີສິກດີນາ ທ້ອງຖິ່ນປົກຄອງ ຢູ່ເປັນກະແຈກກະຈາຍ, ພະໄຈເຈດຖາທິລາດ ໄດ້ຮວບລວມເອົາເປັນອັນໜຶ່ງ ອັນດຽວກັນ, ແລ້ວສະຖາປະນາ ເປັນລາຊະອານາຈັກລ້ານຊ້າງ.

ສະຖາປະນາ - ໃຊ້ຄ້າຍຄືກັບສ້າງຕັ້ງ, ແຕ່ສະຖາປະນາເປັນການສ້າງຕັ້ງ ຂະບວນໃຫຍ່ກວ່າ, ສ້າງຕັ້ງແມ່ນສ້າງຕັ້ງຂະບວນການອັນໃດອັນໜຶ່ງ. ເຊັ່ນ: ການສ້າງຕັ້ງພັກ, ມູນສ້າງຕັ້ງກອງທັບປົດປ່ອຍປະຊາຊົນຈີນ.

- ພັກກອມມູນິດຈີນເມື່ອປົດປ່ອຍປະເທດສຳເລັດແລ້ວ ກໍ່ສ້າງຕັ້ງ ລະບອບສັງຄົມນິຍົມຂຶ້ນໃນປະເທດຈີນ (ໃຊ້ສະຖາປະນາກໍ່ໄດ້).

໔. ສ້າງສາ

ກ. ແມ່ນເອົາຂຶ້ນໃຫ້ເປັນຕົວຈິງຕາມແບບແຜນທີ່ສ້າງຕັ້ງໄວ້ແລ້ວ ຫຼືທີ່ສະຖາ

ປະນາໄວ້ແລ້ວ.

- ການສ້າງສາປະເທດເຮົາ ໃຫ້ກາຍເປັນປະເທດທີ່ທັນສະໄໝ ທີ່ເຂັ້ມແຂງແບບສັງຄົມນິຍົມ ເປັນໜ້າທີ່ຂອງໝົດທຸກຄົນ.
- ພັກແລະລັດຖະບານ ໄດ້ເອົາໃຈໃສ່ ໃນການສ້າງສານະຄອນຫຼວງປັກກິ່ງ ໃຫ້ເປັນເມືອງທັນສະໄໝທຸກດ້ານ.

໔. ກໍ່ສ້າງ (ສ້າງ)

ກ. ແມ່ນເຮັດວຽກສ້າງສະຖານທີ່ຕ່າງໆຂຶ້ນ.

- ຕຶກຫຼັງນີ້ກໍ່ສ້າງມາໄດ້ ໔ ປີແລ້ວ ຍັງບໍ່ແລ້ວ.
- ກໍ່ສ້າງອ່າງເກັບນ້ຳບ່ອນນີ້ ເປືອງແຮງຄົນ ແລະເຄື່ອງອຸປະກອນຫຼາຍ.
- ເຂົາເປັນນາຍຊ່າງກໍ່ສ້າງ.
- ປັດຈຸບັນນີ້ ທາງໂຮງຮຽນເຮົາ ພວມດຳເນີນການກໍ່ສ້າງເປັນການໃຫຍ່.

໕. ຄ້ອຍ

ວ. ຫວ່າງ, ຕ່ຳ, ບ່າຍລົງໄປ. ດິນທີ່ຕ່ຳລົງ ເທື່ອລະນ້ອຍເທື່ອລະນ້ອຍ.
(ດິນທີ່ຄ້ອຍຈາກສູງຂຶ້ນເທື່ອລະນ້ອຍເທື່ອລະເນີນ, ຖ້າສູງຂຶ້ນຫຼາຍ ເອີ້ນວ່າຊັນ).

- ທາງເສັ້ນນີ້ ຈົບລົງໄປຮອດກາງພູແລ້ວ ກໍ່ຄ້ອຍລົງໄປຮອດຕີນພູ. (ແມ່ນຢູ່ເທິງພູເວົ້າ).
- ທາງເສັ້ນນີ້ ເນີນຂຶ້ນໄປຮອດກາງພູແລ້ວ ກໍ່ເລີ່ມຊັນຂຶ້ນໄປ (ແມ່ນຢູ່ຕີນພູເວົ້າ).

- ລົງພູຫນ່ວຍນີ້ ບໍ່ຊັນປານໃດ, ຄ່ອຍລົງຄ່ອຍລົງເທື່ອລະນ້ອຍ ກໍຮອດຕີນພູ.

ຄ. ລຳ

໑) ນ. ຕົ້ນໂຕຂອງຄົນ ສັດ ຕົ້ນໄມ້ ບໍ່ນັບເອົາສ່ວນທີ່ເປັນແຂນຂາ ຫຼືກິ່ງງ່າ.

ລຳຄີງ, ລຳໂຕ 身躯, 躯干

ລຳຕົ້ນ 树干

ລຳແຂ້ງ 小腿 , ລຳຂາ 大腿 , ລຳແຂນ 胳臂 ,

ລຳຄໍ 脖颈 , ລຳໄສ້ 肠 , ແມ່ນ້ຳລຳເຊ -

ລຳນ້ຳ 河流,水道,河道

໒) ກ. ເວົ້າຕາມບົດກອນເປັນຈັງຫວະສອດຂຶ້ນລົງໃສ່ແຄນ 说唱

ລຳໄກວອູ່ 摇篮曲 ລຳກ່ອມລູກ 催眠曲

໓) ລັກສະນະນາມຂອງເຮືອ, ເຮືອບິນວ່າລຳ, ເຮືອ ສາມລຳ 三艘船,

ເຮືອບິນຫ້າລຳ 五架飞机

ງ. ຂັບ

໑) ກ. ບັງຄັບ ຄຸມ ຍານພາຫະນະ ອັນໃດອັນຫນຶ່ງ ໃຫ້ໄປຕາມຄວາມຕ້ອງການ.

- ຂັບລົດ, ເຂົາເປັນຄົນຂັບລົດໂອໂຕ.
- ຂັບລົດໄຟ, ຂັບລົດຈັກໄຖນາ, ຂັບລົດບົດຫົນທາງ.
- ຂັບກວຽນ, ຂັບລົດນ້ຳ, ຂັບເຮືອບິນ, ຂັບເຮືອຈັກ, ຂັບເຮືອເຕາະ ຈັກ

ກະວານ.

໒) ກິ. ຮ້ອງເພງລາວຂອງທ້ອງຖິ່ນ ບາງທ້ອງຖິ່ນ.

- ຫຼວງພະບາງກໍ່ມີ ແບບຂັບຕ່າງໆ ເຊັ່ນຂັບທຸ້ມ ......

- ຜູ້ບ່າວຜູ້ສາວລາວເມື່ອຫຼິ້ນຊຸມ ມ່ວນ ກໍ່ມັກຂັບສົ່ງກັນ (ຂັບຖາມຂັບຫາທາງ ແລະຂັບຕອບ).

- ການຂັບນີ້ ນອກຈາກທ້ອງຖິ່ນຫຼວງພະບາງແລ້ວ, ບ້ານອື່ນໆກໍ່ ກະຫຼອດລື່ນສອງຟັນບາ ໃນດິນຈີນ ກໍ່ຂັບດີກັນ.

- ຄຳ "ຂັບ" ມັກໃຊ້ຄວບເປັນ "ຂັບລຳທຳເພງ".

໓) ຂັບໄລ່, ໄລ່

- ຂັບໄລ່ໄຖຕົວ, ຂັບໄລ່ໄສຕົວ

- ປະຊາຊົນໄດ້ລຸກຂຶ້ນ ຂັບໄລ່ໄຖຕົວ ພວກລຸກລານອອກໜີຈາກປະເທດ.

ພ. ມູນ

ນ. ຮາກ, ເຫງົ້າ, ກົກ, ເຄົ້າ, ຫຼັກເດີມ.

ມູນແມ່ນບ່ອນເກີດທຳອິດ ຄື ມູນເຄົ້າຂອງບັນຫາ ກໍໝາຍເຖິງ ບ່ອນທີ່ກຳເນີດເກີດທຳອິດຂອງບັນຫານັ້ນ,

ເຖິງວ່າ ມູນແມ່ນຄວາມເວົ້າໝາຍເຖິງ ກົກສຸດຂອງວັດຖຸ ສິ່ງຂອງກໍຕາມ, ແຕ່ຍາດໃຊ້ກັບບາງບ່ອນ ຄືກັນແລະບ່ອນແຕກຕ່າງກັນ,ດັ່ງຈະເວົ້າເຖິງຮາກຂອງຕົ້ນໄມ້ເຮົາກໍ່ສາມາດເວົ້າ ມູນຂອງຕົ້ນໄມ້ໄດ້, ເຮົາໃຊ້ໄດ້ແຕ່ຄຳວ່າຮາກ ຫຼືເຫງົ້າເຄົ້າ ກົກ ເທົ່ານັ້ນ.

ມູນຖານ 基本, 基础　　　ມູນເຫດ 原因, 原由



此为试读,需要完整PDF请访问: www.ertongbook.com